ນິທານລາວ

# ຄາຖາສາມຫຼອດ

ແຕ່ຄາວກ່ອນມີຊາຍຄົນນຶ່ງ ກຳເນີດຈາກຄອບຄົວຊາວນາທຸກຍາກ. ຊາຍຄົນນີ້ເປັນກຳພ້າແມ່ແຕ່ຍັງນ້ອຍພຸ້ນ. ລາວຢູ່ນຳພໍ່ຈົນໃຫຍ່ເປັນບ່າວ ແຕ່ລາວບໍ່ໄດ້ຮຽນໜັງສືເລີຍ. ສອງພໍ່ລູກພາກັນຫາລ້ຽງຊີວິດດ້ວຍການເຮັດນາ ແລະ ສວນ. ໃນຕອນເຊົ້າມື້ນຶ່ງ ພໍ່ກຽມຈະໄປສວນຈຶ່ງໄດ້ຖາມລູກວ່າ : ລູກບໍ່ໄປສວນນຳພໍ່ບໍ ? ທ້າວຄຳພາເລີຍບອກພໍ່ວ່າ :ລູກບໍ່ໄປດອກ ຈະຢູ່ເຮືອນຖ້າພໍ່. ໃນເວລາຢູ່ເຮືອນ ທ້າວຄຳພາກໍໄດ້ຕັກນ້ຳ, ໜຶ້ງເຂົ້າ ແລະ ອະນາໄມບ້ານເຮືອນເມື່ອພໍ່ກັບມາແຕ່ສວນ ກໍດີໃຈຫຼາຍ ທີ່ເຫັນລູກຊ່ວຍພໍ່ໄດ້. ສອງພໍ່ລູກຢູ່ນຳກັນຢ່າງມີຄວາມສຸກ. ພໍ່ລູກຊາຍໄດ້ອາຍຸໄດ້ສິບຫົກປີ ພໍ່ກໍປ່ວຍໜັກ, ກ່ອນຕາຍ ພໍ່ໄດ້ມອບຄາຖາດີສາມຫຼອດ ໄວ້ໃຫ້ເປັນມູນມໍລະດົກແກ່ລູກ ແລະ ໄດ້ສັ່ງໄວ້ວ່າ : ລູກເອີຍ ! ຖ້າພໍ່ຫາກຕາຍໄປໃຫ້ລູກເອົາຄາຖາສາມຫຼອດນີ້ແຂວນໃສ່ຄໍໄວ້ເນີ້ , ເມື່ອໃດລູກຕົກທຸກໄດ້ຍາກ ໃຫ້ແກະເອົາຄາຖານີ້ອອກມາອ່ານເທື່ອລະຫຼອດ ແລ້ວພໍ່ກໍສິ້ນລົມຫາຍໃຈ .

ເມື່ອພໍ່ຕາຍໄປແລ້ວ, ລູກຊາຍກໍຂາດທີ່ເພິ່ງພາອາສັຍ ມີແຕ່ຄວາມອຸກອັ່ງຍ້ອນໂດດດ່ຽວປ່ຽວພອຍ. ດັ່ງນັ້ນ ລາວຈຶ່ງປະເຮືອນຊານໄຮ່ນາຮົ້ວສວນແລ້ວກໍທ່ຽວຊັດເຊພະເນຈອນ ໄປຕາມບ້ານຕ່າງໆ ເພື່ອຊອກຫາວຽກເຮັດງານທຳ, ແຕ່ລາວໄປຊອກເຮັດວຽກບ່ອນໃດກໍບໍ່ໄດ້, ນັບມື້ອຶດຫິວ ແລະ ອ່ອນກຳລັງໃຈລົງຊຸກໃຊ້.

ມື້ນຶ່ງ ລາວນັ່ງຄິດໄປຄິດມາ ເລີຍຄິດພໍ້ຄຳເຕືອນຂອງພໍ່ທີ່ວ່າ ໃຫ້ແກະຄາຖາອອກມາອ່ານໃນເມື່ອຈົນປັນຍາ. ແຕ່ລາວພັດອ່ານໜັງສືບໍ່ໄດ້ ຈຶ່ງເຂົ້າໄປຫາຄູບາຢູ່ວັດ ເປັນຜູ່ອ່ານຄາຖາໃຫ້ຟັງ, ຄາຖາຫຼອດທີ່ນຶ່ງບອກໄວ້ວ່າ : ເຫັນພຣະສົງໃຫ້ຢູ່ໃກ້ໆ ສະນັ້ນ ລາວຈຶ່ງຕັດສິນໃຈອາສັຍຢູ່ກິນໃນວັດ ເພື່ອຮ່ຳຮຽນ ໜັງສື. ການຮຽນໜັງສືຂອງລາວ ກໍພໍແຕ່ອ່ານອອກຂຽນເປັນໄດ້ເທົ່ານັ້ນ ແລ້ວກໍໜີຈາກວັດໄປຢູ່ບ່ອນອື່ນ.

ໃນລະຍະຕໍ່ມາຊາຍຄົນນັ້ນພັດໄດ້ພົບຄວາມຂັດສົນຄືເກົ່າ ລາວຈຶ່ງແກະເອົາຄາຖາຫຼອດທີ່ສອງອອກອ່ານເອງ, ຄາຖານີ້ໄດ້ເວົ້າວ່າ : ຕົ້ນໄມ້ເປັນເງິນຄຳ ເມື່ອຮູ້ແນວນັ້ນລາວກໍເຂົ້າປ່າເພື່ອຕັດຟືນມາຂາຍ, ແຕ່ອາຊີບຕັດຟືນ ກໍພໍແຕ່ເອົາຊີວິດຢູ່ລອດເທົ່ານັ້ນ ຍັງອຶດຢາກຂາດ ເຂີນຢູ່. ຈາກນັ້ນ ລາວກໍເອົາຄາຖາຫຼອດທີ່ສາມອອກມາອ່ານອີກ, ຄາຖາຫຼອດສຸດທ້າຍນີ້ຂຽນໄວ້ວ່າ : ຄວາມສຸກທີ່ແທ້ຈິງແມ່ນ ຢູ່ນຳການເຮັດນາ ແລະ ເຮັດສວນ . ເມື່ອຮູ້ແນວນັ້ນ ລາວກໍຕັດສິນໃຈກັບເມືອບ້ານເກົ່າ ແລ້ວກໍເລີ່ມບຸກເບີກຮົ້ວສວນໄຮ່ນາ ທີ່ເປັນມູນມັງຂອງພໍ່ແມ່ປະໄວ້ໃຫ້ນັ້ນດ້ວຍຄວາມຕັ້ງໃຈ. ຮອດຍາມເກັບກ່ຽວ ລາວກໍມີເຂົ້າ, ສາລີ, ເຜືອກ, ມັນ ແລະ ພືດລະປູກອື່ນໆຢ່າງຫຼວງຫຼາຍ. ຊາວບ້ານຫຼາຍຄົນກໍຄິດບໍ່ເຖິງວ່າ ຊາຍກຳພອຍຄົນນີ້ຈະເປັນຜູ່ດຸໝັ່ນສ້າງຕົນເອງໃຫ້ໄດ້ດີແນວນີ້ ມີບາງຄົນກໍບໍ່ເຊື່ອຈຶ່ງຖາມຊາວບ້ານດຽວກັນວ່າ : ຊາຍຄົນນີ້ແມ່ນທ້າວ ກຳພ້າ ຄົນນັ້ນຫຼື ບໍ່ ?.

ດ້ວຍຄວາມດຸໝັ່ນຂຍັນພຽນບໍ່ຢ້ານກົວຕໍ່ແດດ ແລະ ຝົນ ເວລາ ລ່ວງໄປໄດ້ສອງປີ ຊາຍກຳພອຍຄົນນີ້ ກໍມີເຂົ້າປາອາຫານກິນຢ່າງອີ່ມນຳສຳລານ. ຍ້ອນການອອກເຫື່ອເທແຮງເຮັດນາ ເຮັດສວນນັ້ນເອງ ຄືດັ່ງຄຳສຸພາສິດໄດ້ກ່າວໄວ້ວ່າ : ຄວາມພຍາຍາມຢູ່ທີ່ໃດ ຄວາມສຳເຣັດຢູ່ທີ່ນັ້ນ.